**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ ເລກທີ 920 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 28 ກຸມພາ 2018

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນປະກັນຄຸນນະພາບການສຶກສາ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດຳລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 67/ນຍ, ລົງວັນທີ 3 ກຸມພາ 2017;
- ອີງຕາມ ການສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ.

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ທີ່ຕັ້ງ , ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາການສຶກສາ ແລະ ກິລາ ແລະ ແຜນພັດທະນາວຽກງານປະກັນຄຸນນະພາບການສຶກສາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ສູນປະກັນຄຸນນະພາບການສຶກສາ ຂຽນດ້ວຍຕົວອັກສອນຫຍໍ້ **“ສປຄ”** ເປັນຫົວໜ່ວຍວິຊາການ ລະດັບສອງ ມີພາລະບົດບາດເປັນເສນາທິການ ໃຫ້ແກ່ລັດຖະມົນຕີ ກ່ຽວກັບ ການກຳນົດມາດຕະຖານຄຸນນະພາບການສຶກສາ ທຸກຊັ້ນ, ທຸກສາຍ ທັງພາກລັດ ແລະ ເອກະຊົນ, ກຳນົດຂອບວຸດທິການສຶກສາແຫ່ງຊາດ ໃຫ້ເທົ່າທຽມກັບມາດຕະຖານ ຂອງພາກພື້ນ ແລະ ສາກົນ.

## ໝວດທີ 2

## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

ສູນປະກັນຄຸນນະພາບການສຶກສາ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຜັນຂະຫຍາຍແນວທາງນະໂຍບາຍ, ກົດລະບຽບ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດ, ທິດທາງແຜນການ ແລະ ຍຸດທະສາດຂອງກະຊວງສຶກສາທິການ ແລະ ກິລາ ເພື່ອສ້າງເປັນແຜນພັດທະນາວຽກງານຂອງຕົນ;
2. ສ້າງ ແລະ ປັບປຸງ ນິຕິກຳຕ່າງໆ ເພື່ອຄຸ້ມຄອງ ບໍລິຫານວຽກງານປະກັນຄຸນນະພາບການສຶກສາ ແລະ ຂອບວຸດທິການສຶກສາແຫ່ງຊາດ;
3. ຊີ້ນຳ ສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານການປະກັນຄຸນນະພາບ ແລະ ຂອບວຸດທິການສຶກສາແຫ່ງຊາດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ;
4. ພັດທະນາ ແລະ ປັບປຸງ ຄູ່ມື, ເຄື່ອງມື ແລະ ສື່ຕ່າງໆ ເພື່ອນຳໃຊ້ໃນວຽກງານປະກັນຄຸນນະພາບການສຶກສາ;
5. ເປັນໃຈກາງປະສານງານ ການປະເມີນຄຸນນະພາບພາຍນອກ ຂອງສະຖານການສຶກສາ ແລະ ຫຼັກສູດການສຶກສາ ຕາມມາດຕະຖານທີ່ໄດ້ຖືກປະກາດນຳໃຊ້ ເພື່ອການປັບປຸງ ແລະ ຮັບຮອງຄຸນນະພາບ;
6. ປະເມີນຜົນການຮຽນຂອງຜູ້ຮຽນ ຕາ ມມາດຕະຖານ, ເພື່ອຮັບປະກັນຄວາມສອດຄ່ອງ ຕໍ່ຂອບວຸດທິການສຶກສາແຫ່ງຊາດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
7. ທົດສອບຜົນການຮຽນ ທຸກຊັ້ນທຸກສາຍ ແລະ ປະກາດຜົນການທົດສອບ ປະຈຳປີ ໃຫ້ສັງຄົມໄດ້ຮັບຮູ້ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
8. ຄຸ້ມຄອງຖານຂໍ້ມູນປະກັນຄຸນນະພາບການສຶກສາ ອີງຕາມມາດຕະຖານຄຸ້ມຄອງຂໍ້ມູນ ຂອງຂະແໜງການສຶກສາທິການ ແລະ ກິລາ;
9. ປະສານງານ ແລະ ຮ່ວມມືທາງວິຊາການ ກັບອົງກອນ ແລະ ເຄືອຂ່າຍປະກັນຄຸນນະພາບການສຶກສາໃນພາກພື້ນ ແລະ ສາກົນ ຕາມການອະນຸມັດຂອງລັດຖະມົນຕີ;
10. ກວດກາ, ຕິດຕາມ, ປະເມີນຜົນ ແລະ ສະຫຼູບລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ໃນແຕ່ລະໄລຍະ;
11. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງລັດຖະມົນຕີ.

### ມາດຕາ 4 ຂອບເຂດສິດ

ສູນປະກັນຄຸນນະພາບການສຶກສາ ມີຂອບເຂດສິດ ດັ່ງນີ້:

1. ສະເໜີແຜນການ ແລະ ແຜນງົບປະມານເພື່ອພັດທະນາວຽກງານທີ່ຕົນຮັບຜິດຊອບຕໍ່ລັດຖະມົນຕີ;
2. ສະເໜີລັດຖະມົນຕີພິຈາລະນາ, ອະນຸມັດ, ປັບປຸງ, ສ້າງ ຫຼື ຍົກເລີກບັນດານິຕິກຳຄຸ້ມຄອງການສຶກສາ ແລະ ກິລາ ທີ່ບໍ່ສອດຄ່ອງ;
3. ສະເໜີຕໍ່ລັດຖະມົນຕີ ພິຈາລະນາ, ອະນຸມັດ, ສ້າງຕັ້ງ ຫຼື ຍົກເລີກ ຂະແໜງຕ່າງໆ ທີ່ຂຶ້ນກັບການຄຸ້ມຄອງຂອງສູນ;
4. ສະເໜີລັດຖະມົນຕີ ແຕ່ງຕັ້ງ, ປົດຕຳແໜ່ງ, ສັບຊ້ອນ ຫຼື ຍົກຍ້າຍ ພະນັກງານບໍລິຫານຂັ້ນຕ່າງໆ ຕາມລະບຽບກົດໝາຍ;

5. ຄຸ້ມຄອງ, ນຳໃຊ້ງົບປະມານ, ວັດຖຸ, ຊັບສິນ, ກອງທຶນ, ທຶນຊ່ວຍເຫຼືອປະເພດຕ່າງໆ ຕາມການອະນຸມັດຂອງລັດຖະມົນຕີ;
6. ປະຕິບັດໂຄງການຊ່ວຍເຫຼືອລ້າ, ໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການອະນຸມັດຂອງລັດຖະມົນຕີ;
7. ສະເໜີລັດຖະມົນຕີປົກປ້ອງ, ຄຸ້ມຄອງບຸກຄະລາກອນ, ຊັບສິນ, ລິຂະສິດທາງດ້ານການສຶກສາ ແລະ ກິລາ ຕາມການແບ່ງຂັ້ນຄຸ້ມຄອງ;
8. ປະຕິບັດວຽກງານອື່ນໆ ຕາມການມອບໝາຍຂອງລັດຖະມົນຕີ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ສູນປະກັນຄຸນນະພາບການສຶກສາ ປະກອບມີ 5 ຂະແໜງຄື:

1. ຂະແໜງ ບໍລິຫານ
2. ຂະແໜງ ທົດສອບຜົນການຮຽນ
3. ຂະແໜງ ປະກັນຄຸນນະພາບການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ
4. ຂະແໜງ ປະກັນຄຸນນະພາບອາຊີວະສຶກສາ ແລະ ການສຶກສາຊັ້ນສູງ
5. ຂະແໜງ ພັດທະນາຂອບວຸດທິການສຶກສາແຫ່ງຊາດ

**ມາດຕາ 6 ໂຄງປະກອບບຸກຄະລາກອນ ແລະ ຕຳແໜ່ງງານ**

ສູນປະກັນຄຸນນະພາບການສຶກສາ ມີບຸກຄະລາກອນ ຈຳນວນ 30 ຕຳແໜ່ງ ລາຍລະອຽດດັ່ງນີ້:

1. ຜູ້ອຳນວຍການສູນ 1 ຕຳແໜ່ງ
2. ຮອງຜູ້ອຳນວຍການສູນ 2 ຕຳແໜ່ງ
3. ຫົວໜ້າຂະແໜງ 5 ຕຳແໜ່ງ
4. ຮອງຫົວໜ້າຂະແໜງ 6 ຕຳແໜ່ງ
5. **ພະນັກງານວິຊາການທັງໝົດຈຳນວນ 16 ຕຳແໜ່ງ**
    1) ຂະແໜງ ບໍລິຫານ 4 ຕຳແໜ່ງ
    2) ຂະແໜງ ທົດສອບຜົນການຮຽນ 3 ຕຳແໜ່ງ
    3) ຂະແໜງ ປະກັນຄຸນນະພາບການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ 3 ຕຳແໜ່ງ
    4) ຂະແໜງ ປະກັນຄຸນນະພາບອາຊີວະສຶກສາ ແລະ ການສຶກສາຊັ້ນສູງ 3 ຕຳແໜ່ງ
    5) ຂະແໜງ ພັດທະນາຂອບວຸດທິການສຶກສາແຫ່ງຊາດ 3 ຕຳແໜ່ງ

## ໝວດທີ 4
## ໜ້າທີ່ຂອງແຕ່ລະຂະແໜງ

**ມາດຕາ 7 ໜ້າທີ່ຂອງຂະແໜງບໍລິຫານ**

ຂະແໜງບໍລິຫານ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ສັງລວມ ແລະ ຄຸ້ມຄອງເອກະສານຂາເຂົ້າ-ຂາອອກ, ແຜນການ, ແຜນງານຂອງສູນ;
2. ສ້າງແຜນງົບປະມານ, ຄຸ້ມຄອງການນຳໃຊ້, ຕິດຕາມ ແລະ ສະຫຼຸບການຈັດຕັ້ງປະຕິບັດ;
3. ບັນທຶກກອງປະຊຸມ, ບົດສະຫຼຸບປະຈຳອາທິດ, ປະຈຳເດືອນ, ປະຈຳ 6 ເດືອນ ແລະ ປະຈຳປີ;
4. ຄຸ້ມຄອງບັນຊີ, ການເງິນ, ຊັບສິນ, ອຸປະກອນ, ເອກະສານ ແລະ ວຽກງານສະຫວັດດີການ-ສັງຄົມພາຍໃນ;
5. ຈັດພິມ, ສຳເນົາ ເກັບມ້ຽນເອກະສານ, ນິຕິກຳຕ່າງໆ;
6. ເຜີຍແຜ່ຜົນສຳເລັດການປະຕິບັດກິດຈະກຳຕ່າງໆ ຜ່ານສື່ ແລະ ເວັບໄຊ;
7. ພັດທະນາ ແລະ ຄຸ້ມຄອງລະບົບຄຸ້ມຄອງຖານຂໍ້ມູນຄຸນນະພາບການສຶກສາ;
8. ຄຸ້ມຄອງພິທີການ ແລະ ການພົວພັນປະສານງານກັບພາກສ່ວນອື່ນໆ ທັງໃນ ແລະ ນອກ;
9. ຄົ້ນຄວ້າຂຽນຄູ່ມືວິທີການເຮັດວຽກ ແລະ ການກຳນົດຕຳແໜ່ງງານຂອງສູນ;
10. ປະຕິບັດວຽກງານອື່ນໆ ຕາມການມອບໝາຍ.

**ມາດຕາ 8 ໜ້າທີ່ຂະແໜງທົດສອບຜົນການຮຽນ**

ຂະແໜງທົດສອບຜົນການຮຽນ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ພັດທະນານິຕິກຳຕ່າງໆ ກ່ຽວກັບການທົດສອບຜົນການຮຽນ;
2. ພັດທະນາຄັງຂໍ້ສອບ ແລະ ເຄື່ອງມືອື່ນໆ ເພື່ອໃຊ້ໃນການທົດສອບຜົນການຮຽນ;
3. ທົດສອບຜົນການຮຽນ ໃນລະດັບສາມັນສຶກສາ, ວິເຄາະຜົນ ແລະ ເຮັດບົດລາຍງານ;
4. ທົດສອບ/ແຂ່ງຂັນຄວາມຮູ້ຜູ້ຮຽນຜ່ານລະບົບອອນລາຍ;
5. ຈັດຕັ້ງການແຂ່ງຂັນຄວາມສາມາດຂອງຜູ້ຮຽນ ຕາມມາດຕະຖານຂອງພາກພື້ນ ແລະ ສາກົນ;
6. ປະຕິບັດວຽກງານອື່ນໆ ຕາມການມອບໝາຍ.

**ມາດຕາ 9 ໜ້າທີ່ຂະແໜງປະກັນຄຸນນະພາບກ່ອນໄວຮຽນ ແລະ ສາມັນສຶກສາ**

ຂະແໜງປະກັນຄຸນນະພາບກ່ອນໄວຮຽນ ແລະ ສາມັນສຶກສາ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ພັດທະນາມາດຕະຖານ, ຕົວຊີ້ວັດ, ເຄື່ອງມື, ເກນການປະເມີນ ແລະ ນິຕິກຳຕ່າງໆ ກ່ຽວກັບ ການປະກັນຄຸນນະພາບກ່ອນໄວຮຽນ ແລະ ສາມັນສຶກສາ;
2. ຈັດຝຶກອົບຮົມວຽກງານການປະກັນຄຸນນະພາບກ່ອນໄວຮຽນ ແລະ ສາມັນສຶກສາ ໃຫ້ສະຖານການສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ;
3. ຕິດຕາມ, ປະເມີນຄຸນນະພາບການສຶກສາພາຍໃນ-ພາຍນອກ ແລະ ສົ່ງເສີມການປະກັນຄຸນນະພາບຂອງສະຖານການສຶກສາ ທັງພາກລັດ ແລະ ເອກະຊົນ;
4. ປະຕິບັດວຽກງານອື່ນໆ ຕາມການມອບໝາຍ.

**ມາດຕາ 10 ໜ້າທີ່ຂະແໜງປະກັນຄຸນນະພາບອາຊີວະສຶກສາ ແລະ ການສຶກສາຊັ້ນສູງ**

ຂະແໜງປະກັນຄຸນນະພາບອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ພັດທະນາມາດຕະຖານ, ຕົວຊີ້ວັດ, ເຄື່ອງມື, ເກນການປະເມີນ ແລະ ນິຕິກຳຕ່າງໆ ກ່ຽວກັບການປະກັນຄຸນນະພາບອາຊີວະສຶກສາ ແລະ ການສຶກສາຊັ້ນສູງ;
2. ຈັດເຝິກອົບຮົມການນຳໃຊ້ລະບົບປະກັນຄຸນນະພາບ ໃຫ້ສະຖານການສຶກສາ ແລະ ພາກສ່ວນທີ່ກ່ຽວຂ້ອງ;
3. ສົ່ງເສີມການປະກັນຄຸນນະພາບພາຍໃນ ຂອງສະຖານສຶກສາ ທັງພາກລັດ ແລະ ເອກະຊົນ;
4. ປະເມີນຄຸນນະພາບ ໃຫ້ສະຖານການສຶກສາ ຕາມມາດຕະຖານທີ່ໄດ້ອະນຸມັດ;
5. ປະຕິບັດວຽກງານອື່ນໆ ຕາມການມອບໝາຍ.

**ມາດຕາ 11 ໜ້າທີ່ຂະແໜງຄຸ້ມຄອງຂອບວຸດທິການສຶກສາແຫ່ງຊາດ**

ຂະແໜງຄຸ້ມຄອງຂອບວຸດທິການສຶກສາແຫ່ງຊາດ ມີໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຄຸ້ມຄອງການຈັດຕັ້ງປະຕິບັດ ຂອບວຸດທິການສຶກສາແຫ່ງຊາດ;
2. ເປັນກອງເລຂາ ໃຫ້ວຽກງານເຊື່ອມໂຍງກັບພາກພື້ນ ແລະ ສາກົນ;
3. ພັດທະນາລະບຽບການເພື່ອສົ່ງເສີມການຮຽນຮູ້ຕະຫຼອດຊີວິດ;
4. ພັດທະນາລະບຽບການເພື່ອສົ່ງເສີມການທົດສອບສີມືແຮງງານ;
5. ພັດທະນາລະບຽບການເພື່ອຮັບຮອງຜົນການທົດສອບ;
6. ປະຕິບັດວຽກງານອື່ນໆ ຕາມການມອບໝາຍ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 12 ຫຼັກການ**

ສູນປະກັນຄຸນນະພາບການສຶກສາ ເຄື່ອນໄຫວວຽກງານຕາມຫຼັກການດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມຂອງສູນປະກັນຄຸນນະພາບການສຶກສາ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ, ລັດຖະກອນທຸກລະດັບ;
3. ທຸກການເຄື່ອນໄຫວຂອງພະນັກງານ,ລັດຖະກອນ ແມ່ນອີງໃສ່ລະບຽບກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ, ລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5 ປີ ຂອງກະຊວງ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 13 ແບບແຜນວິທີເຮັດວຽກ**

ສູນປະກັນຄຸນນະພາບການສຶກສາ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແບບແຜນ, ແຜນງານ ແລະ ໂຄງການລະອຽດ , ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະ

ກັບການຈັດຕັ້ງປະຕິບັດວຽກງານສູນປະກັນຄຸນນະພາບການສຶກສາ ໃຫ້ໄດ້ຮັບຜົນດີ;

2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຮັບ , ຜົນເສຍ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານ ໃຫ້ຂັ້ນເທິງ ແລະ ລັດຖະບານເປັນປົກກະຕິ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 14 ງົບປະມານ ແລະ ຕາປະທັບ

ສູນປະກັນຄຸນນະພາບການສຶກສາ ມີງົບປະມານຮັບໃຊ້ວຽກງານຂອງຕົນ ຊຶ່ງໄດ້ມາຈາກງົບປະມານຂອງກະຊວງສຶກສາທິການ ແລະ ກິລາ, ການຊ່ວຍເຫຼືອ, ການຮ່ວມມືຈາກບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ແລະ ມີຕາປະທັບ ເພື່ອຮັບໃຊ້ວຽກງານທາງລັດຖະການ.

### ມາດຕາ 15 ການຜັນຂະຫຍາຍ

ມອບໃຫ້ ສູນປະກັນຄຸນນະພາບການສຶກສາ ກຳນົດໜ້າທີ່, ກິດຈະກຳລະອຽດ ແລະ ກຳນົດມາດຕະຖານແຕ່ລະຕຳແໜ່ງງານ ເພື່ອນຳສະເໜີລັດຖະມົນຕີບັນຈຸ ແລະ ສັບຊ້ອນພະນັກງານເຂົ້າໃສ່ຕຳແໜ່ງງານຕາມຄວາມເໝາະສົມ.

### ມາດຕາ 16 ການຈັດຕັ້ງປະຕິບັດ

ບັນດາ ຫ້ອງການ, ກົມ, ອົງການທຽບເທົ່າ, ສະຖາບັນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນ ຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ໄດ້ຮັບຜົນ.

### ມາດຕາ 17 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ຕົກລົງສະບັບເລກທີ 3481/ສສກ.ຈຕ, ລົງວັນທີ 10 ກັນຍາ 2012. ທຸກຂໍ້ຕົກລົງ ແລະ ເອກະສານຕ່າງໆ ຊຶ່ງປະກາດໃຊ້ໃນ ເມື່ອກ່ອນທີ່ຂັດກັບຂໍ້ຕົກລົງສະບັບນີ້ລ້ວນຖືກລົບລ້າງ.

**ລັດຖະມົນຕີ**

**ນ.ແສງເດືອນ ຫຼ້າຈັນທະບູນ**

**ບ່ອນນຳສົ່ງ:**

| | |
|---|---|
| 1. ກະຊວງພາຍໃນ | 1 ສະບັບ. |
| 2. ຫ້ອງການກະຊວງ | 1 ສະບັບ. |
| 3. ບັນດາກົມ, ສູນ ແລະ ສະຖາບັນພາກສ່ວນລະ | 1 ສະບັບ . |
| 4. ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ພາກສ່ວນລະ | 1 ສະບັບ. |
| 5. ພາກສ່ວນທີ່ກ່ຽວຂ້ອງ | 3 ສະບັບ. |
| 6. ເກັບມ້ຽນ | 3 ສະບັບ. |